PA
ຮັບ ແລ້ວ.
23/6/2017 

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 22 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 19 ມິຖຸນາ 2017

ສຳນັກງານ ຄຄຊ
ລົງເລກ ເລກທີ 0654
ວັນທີ 22 JUN 2017
ໂທລະສັບ 021 217770

## ລາຍງານການເຄື່ອນໄຫວປະຈຳ ອາທິດທີ 05-09/06/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປຂອງທະນາຄານແຫ່ງ ສປປ ລາວ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,42% ທຽບເອີໂຣ ເນື່ອງຈາກທະນາຄານກາງສະຫະພາບເອີຣົບ (ECB) ຍັງສືບຕໍ່ຮັກສາອັດຕາດອກເບ້ຍນະໂຍບາຍໄວ້ໃນລະດັບ 0,25% ແລະ ຍັງຮັກສາວົງເງິນໃນການຊື້ພັນທະບັດຕາມມາດຕະການ QE ໃນຈຳນວນ 60 ຕື້ເອີໂຣຕໍ່ເດືອນ ໄປຈົນຮອດເດືອນ 12/2017.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 29/05/-02/06/2017 | ອາທິດນີ້ 05-09/06/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1220 | 1,1173 | 0,42% |
| ໂດລາ/ເຢນ | 111,46 | 110,40 | 0,96% |
| ໂດລາ/ບາດ | 34,14 | 34,06 | 0,23% |
| ໂດລາ/ເປໂຊ | 49,46 | 49,52 | -0,11% |
| ໂດລາ/ຣູເປັຍ | 13.303 | 13.290 | 0,10% |
| ໂດລາ/ໂດລາສິງກະໂປ | 1,3858 | 1,3841 | 0,12% |
| ໂດລາ/ຢວນ | 6,8186 | 6,7965 | 0,33% |

#### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນຫຼຸດລົງ 2,37% ຈາກ 46,91 ໂດລາ/ບາເຣວ ມາເປັນ 45,80 ໂດລາ/ບາເຣວ ເນື່ອງຈາກຄວາມຕ້ອງການຊົມໃຊ້ນ້ຳຂອງສະຫະລັດອາເມລິກາຫຼຸດລົງ ເຫັນໄດ້ຈາກສຳນັກງານດ້ານພະລັງງານຂອງສະຫະລັດ (EIA) ປະກາດຍອດເຫຼືອນ້ຳມັນດິບໃນສາງຂອງສະຫະລັດ ເພີ່ມຂຶ້ນ 3,3 ລ້ານບາເຣວ;

- ສຳລັບລາຄາຄຳເພີ່ມຂຶ້ນ 0,87% ຈາກ 1.262,35 ໂດລາ/ອອນ ມາເປັນ 1.273,36 ໂດລາ/ອອນ ຍ້ອນນັກລົງທຶນເຂົ້າຊື້ສັນຍາຊື້-ຂາຍຄຳ ເພີ່ມຂຶ້ນ ເພື່ອປ້ອງກັນຄວາມສ່ຽງຈາກການປ່ຽນແປງຂອງຄ່າເງິນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,26% ແລະ ອ່ອນຄ່າລົງ 0,66% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າ 2,55% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າ 7,83% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 29/05/-02/06/2017 | | | ອາທິດນີ້ 05-09/06/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.353,83 | 8.387,15 | 8.368,79 | 8.383,02 | 8.406,01 | 8.390,74 | -0,35% | -0,22% | -0,26% | -2,76% | -2,36% | -2,55% |
| ບາດ | 246,02 | 246,68 | 246,38 | 247,14 | 248,33 | 248,01 | -0,45% | -0,66% | -0,66% | -7,88% | -7,79% | -7,83% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 0,005% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 19,26%;
- ປະລິມານເງິນ M2 ເພີ່ມຂຶ້ນ 1,35% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 19,77%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (02-08/06/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 17,69 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 53,50 ລ້ານໂດລາ ແລະ ຂາຍໂດລາໄດ້ 35,81 ລ້ານໂດລາ) ແຕ່ ຂາຍເງິນບາດສຸດທິ 1.321,07 ລ້ານບາດ (ໃນນີ້ ຊື້ບາດໄດ້ 209,52 ລ້ານບາດ ແລະ ຂາຍບາດໄດ້ 1.530,59 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າ ເງິນໂດລາເພີ່ມຂຶ້ນ 13,76% ແຕ່ ເງິນບາດຫຼຸດລົງ 16,10%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈຳນວນ 19,30 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 33 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 10,33 ລ້ານໂດລາສະຫະລັດ ແລະ ເງິນບາດຈຳນວນ 33 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ບໍ່ມີການເຄື່ອນໄຫວ.

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 26/05/-01/06/2017 | | ອາທິດທີ 26/05/-01/06/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **51,59** | **286,99** | **53,50** | **209,52** | **3,70%** | **-26,99%** |
| - ທ/ຄທຸລະກິດລັດ | 10,87 | 106,37 | 10,89 | 73,18 | 0,18% | -31,20% |
| - ທ/ຄທຸລະກິດອື່ນໆ | 40,72 | 180,62 | 42,61 | 136,34 | 4,64% | -24,52% |
| 2. ການຂາຍເງິນຕາຕ່າງປະເທດ | **26,92** | **1.787,05** | **35,81** | **1.530,59** | **33,02%** | **-14,35%** |
| - ທ/ຄທຸລະກິດລັດ | 15,31 | 263,98 | 27,44 | 91,07 | 79,23% | -65,50% |
| - ທ/ຄທຸລະກິດອື່ນໆ | 11,61 | 1.523,07 | 8,37 | 1.439,52 | -27,91% | -5,49% |
| ຊື້-ຂາຍສຸດທິ ທທກ | **24,67** | **-1.500,06** | **17,69** | **-1.321,07** | **-28,29%** | **-11,93%** |
| - ຜິດດ່ຽງ ຊື້-ຂາຍ | 47,82% | -522,69% | 33,07% | -630,52% | -30,85% | 20,63% |
| - ມູນຄ່າການຊື້-ຂາຍ | **78,51** | **2.074,04** | **89,31** | **1.740,11** | **13,76%** | **-16,10%** |
| 3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ | **-14,77** | **-33,00** | **-19,30** | **-33,00** | | |
| - ທຫລ ຊື້ຈາກ ທທກ | 1,18 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 15,95 | 33,00 | 19,30 | 33,00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **5,44** | **12,00** | **10,33** | **33,00** | | |
| 5. ທຫລ ກັບ ພາກສ່ວນ ອື່ນໆ | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 06/2017 ຄາດວ່າຢູ່ໃນລະດັບ 0,62% ຫຼຸດລົງຈາກ 1,07% ທຽບໃສ່ເດືອນ 05/2017.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດ ໃນອາທິດນີ້ ເພີ່ມຂຶ້ນ 46,1% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 69,59 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 27% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 60,31 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 824 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 198 ສະບັບ ເທົ່າກັບ 19,37% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 271,55 ຕື້ກີບ ຫຼຸດລົງ 210,54 ຕື້ກີບ ເທົ່າກັບ 43,67% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (02-08/06/2017) ມີທັງໝົດ 2.945 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 2.866 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 475,22 ຕື້ກີບ ຈາກ 994,79 ຕື້ກີບ ມາເປັນ 519,57 ຕື້ກີບ ເທົ່າກັບ 47,77%;

- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 79 ຄັ້ງ, ມູນຄ່າການໂອນໃນອາທິດ ເພີ່ມຂຶ້ນ 43,44 ຕື້ກີບ ຈາກ 5,47 ຕື້ກີບ ມາເປັນ 48,91 ຕື້ກີບ.

4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.010,17 ຈຸດ ຫຼຸດລົງ 2,37% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 232.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,2 ຕື້ກີບ ເພີ່ມຂຶ້ນ 111,07% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 69,16% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 29/05/-02/06/2017 | ດັດຊະນີອາທິດທີ 05-09/06/2017 | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.034,71 | 1.010,17 | -2,37 | |

ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX) (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ(ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການ ຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 78.800 | 416.620.000 | 5.287 | 137.200 | 728.640.000 | 5.311 | 74,11 | 74,89 | 24 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 27.800 | 141.380.000 | 5.086 | 94.800 | 478.655.000 | 5.049 | 241,01 | 238,56 | -37 |
| ບໍລິສັດລາວເວີນ ມະຫາຊົນ | 2.000 | 14.000.000 | 7.000 | - | - | 7.000 | -100,00 | -100,00 | - |
| ບໍລິສັດປີໂຕລ້ຽມເທຣດດິ້ງລາວ ມະຫາຊົນ | - | - | 2.000 | - | - | 2.000 | - | - | - |
| ບໍລິສັດສູວັນນີໂຮມເຊັນເຕີ ມະຫາຊົນ | - | - | 3.000 | - | - | 3.000 | - | - | - |
| ທັງໝົດ | 108.600 | 572.000.000 | 5.267 | 232.000 | 1.207.295.000 | 5.204 | 113,63 | 111,07 | |

3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສຳເລັດການຈັດກອງປະຊຸມ ແລະ ສຳມະນາຕ່າງໆ: : ❶ ກອງປະຊຸມສ່ອງແສງວຽກງານສາຍພັກ ແລະ ສາຍລັດ ປະຈຳເດືອນ ພຶດສະພາ 2017 ທີ່ (ທຫລ); ❷ ກອງປະຊຸມປຶກສາຫາລືກ່ຽວກັບວຽກງານຮ່ວມມືລະຫວ່າງ ຕະຫຼາດຫຼັກຊັບລາວ ກັບ ຕະຫຼາດຫຼັກຊັບ ສ.ເກົາຫຼີ ທີ່ (ທຫລ); ❸ ກອງປະຊຸມປຶກສາຫາລືກ່ຽວກັບສະພາບອັດຕາແລກປ່ຽນ

ທີ່ (ທຫລ); ❹ ກອງປະຊຸມປຶກສາຫາລືກ່ຽວກັບການຜ່ານຮ່າງແຜນປັບປຸງ ແລະ ພັດທະນາລະບົບເຄືອຄ່າຍຂອງ ທຫລ ທີ່ (ທຫລ); ❺ ກອງປະຊຸມປຶກສາຫາລືກ່ຽວກັບວຽກງານການນໍາໃຊ້ຕູ້ເອທີເອັມ (ATM) ຮ່ວມກັນລະຫວ່າງທະນາຄານທຸລະກິດດ້ວຍກັນ ທີ່ (ທຫລ) ແລະ ❻ ກອງປະຊຸມຄົ້ນຄວ້າກ່ຽວກັບການປັບປຸງຮ່າງກົດໝາຍວ່າດ້ວຍລະບົບຊໍາລະສະສາງແຫ່ງຊາດ ທີ່ (ທຫລ);

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ສໍາເລັດລົງໄປເຄື່ອນໄຫວວຽກງານລັດຖະການຢູ່ທ້ອງຖິ່ນ ທີ່ (ແຂວງ ຊຽງ ຂວາງ ແລະ ແຂວງ ຈໍາປາສັກ);

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ທີ່ໄດ້ກໍານົດໄວ້ໃນແຜນວຽກປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;

- **ກະກຽມຈັດກອງປະຊຸມ ແລະ ສໍາມະນາຕ່າງໆ:** ❶ ກອງປະຊຸມຄະນະປະຈໍາພັກຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ທີ່ (ທຫລ); ❷ ກອງປະຊຸມປຶກສາຫາລືກ່ຽວກັບວິທີການ ແລະ ມາດຕະການແກ້ໄຂບັນຫາ ບໍລິສັດພີເອັສ ທີ່ດໍາເນີນທຸລະກິດບໍ່ສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ ທີ່ (ທຫລ); ❸ ກອງປະຊຸມປຶກສາຫາລືກ່ຽວກັບການແລກປ່ຽນເງິນຕາຕ່າງປະເທດ ທີ່ (ທຫລ); ❹ ກອງປະຊຸມລາຍງານສະພາບການຂອງຕະຫຼາດຫຼັກຊັບລາວ ເພື່ອກະກຽມເຮັດວຽກຮ່ວມກັບຕະຫຼາດຫຼັກຊັບ ສເກົາຫຼີ ທີ່(ກະຊວງການເງິນ) ແລະ ❺ ກອງປະຊຸມຄະນະຮັບຜິດຊອບຄົ້ນຄວ້ານະໂຍບາຍອັດຕາແລກປ່ຽນ ແລະ ຄຸ້ມຄອງເງິນຕາຕ່າງປະເທດ ທີ່ (ທຫລ);

- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບຄະນະນໍາ ທຫລ ຂອງຜູ້ຕ່າງໜ້າ ຈາກຕະຫຼາດຫຼັກຊັບ ສ.ເກົາຫຼີ, ທ່ານ Deepark Mishra, ຜູ້ບໍລິຫານຝ່າຍເສດຖະກິດມະຫາພາກ ແລະ ງົບປະມານຂອງທະນາຄານໂລກ ແລະ ປະທານກຸ່ມສະຖາບັນການເງິນ ດີຈີບີ;

- ກະກຽມເຂົ້າຮ່ວມກອງປະຊຸມຕ່າງໆ: 1) ກອງປະຊຸມສາມະນາໃນຫົວຂໍ້ " ເປີດໂລກແຫ່ງການລົງທຶນຕອນ: ບໍລິສັດຈົດທະບຽນກັບຄວາມທ້າທ້າຍໃນຍຸກຕະຫຼາດທຶນ" ທີ່ (ຕະຫຼາດຫຼັກຊັບລາວ); 2) ກອງປະຊຸມສຸດຍອດດ້ານພະລັງງານໄຟຟ້າ ສປປ ລາວ 2017 ຂອງກະຊວງພະລັງງານ ແລະ ບໍ່ແຮ່ ທີ່ (ໂຮງແຮມດອນຈັນພາເລດ);

- ກະກຽມອອກແຈ້ງການຕ່າງໆ: 1) ແຈ້ງການເຖິງສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ, ກົມວິຊາສະເພາະ ແລະ ຄະນະຮັບຜິດຊອບປັບປຸງກົດໝາຍຕ່າງໆ ກ່ຽວກັບການສັງລວມຂໍ້ມູນຂອງປະຊາຊົນຜູ້ມີອາຍຸ 18 ປີຂຶ້ນໄປທີ່ມີບັນຊີເງິນຝາກໃນທະນາຄານທຸລະກິດ ແລະ ຈໍານວນຕູ້ ATM, ສາຂາທະນາຄານ, ໜ່ວຍບໍລິການທະນາຄານ ແລະ ສະຖາບັນການເງິນ ແລະ ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານຄົ້ນຄວ້າປັບປຸງກົດໝາຍທີ່ຕິດພັນກັບຂະແໜງທະນາຄານ; 2) ແຈ້ງການເຖິງຄະນະຮັບຜິດຊອບປັບປຸງກົດໝາຍວ່າດ້ວຍລະບົບຊາລະສະສາງແຫ່ງຊາດ ແລະ ກົມວິຊາສະເພາະ ຕອບຄໍາຖາມເຈາະຈີ້ມ ເພື່ອລາຍງານຕໍ່ກອງປະຊຸມລັດຖະບານ ສະໄໝສາມັນປະຈໍາເດືອນ ມິຖຸນາ 2017;

- ກະກຽມຄວາມພ້ອມທຸກດ້ານໃຫ້ແກ່ກອງປະຊຸມບັ້ນດໍາເນີນຊີວິດການເມືອງປົວແປງພັກຂອງ ທຫລ ໃນປີ 2017.

ເຊັນແທນຫົວໜ້າຫ້ອງການ

ຮອງຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສຸກັນ ຈັນທະວົງ